# ຄຳປາໄສຂອງທ່ານ **DM Koizumi** ໃນກອງປະຊຸມຊາງກຣີລາ ຄັ້ງທີ **23 (2026)**




ກອງປະຊຸມຄົບຄະນະຄັ້ງທີ **5:**

ການຈັດການກັບຄວາມເຄັ່ງຕຶງໃນລະດັບພາກພື້ນທ່າມກາງການແຂ່ງຂັນທົ່ວໂລກ

ວັນທີ **31** ພຶດສະພາ **2026**

ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງສູງທີ່ໄດ້ມີໂອກາດກ່າວປາໃສຕໍ່ໜ້າທຸກທ່ານໃນມື້ນີ້ທີ່ກອງປະຊຸມຊາງກຣີລາ,
ເຊິ່ງເປັນກອງປະຊຸມທີ່ສຳຄັນທີ່ສຸດສຳລັບການພິຈາລະນາອະນາຄົດຂອງພາກພື້ນອິນໂດ-ປາຊີຟິກ. ຂ້າພະເຈົ້າຂໍສະແດງຄວາມເຄົາລົບນັບຖື ແລະ ຄວາມຂອບໃຈເປັນຢ່າງສູງມາຍັງ IISS ທີ່ຈັດກອງປະຊຸມຄັ້ງນີ້ ພ້ອມທັງຂໍຂອບໃຈ ຕໍ່ປະເທດສິງກະໂປ, ໃນຖານະເຈົ້າພາບທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ..

ນອກຈາກນີ້, ຂ້າພະເຈົ້າຮູ້ສຶກດີໃຈເປັນຢ່າງຍິ່ງ ທີ່ໄດ້ຮ່ວມຂຶ້ນເວທີນີ້ກັບທ່ານ ຄາເລັດ ລັດຖະມົນຕີກະຊວງປ້ອງກັນປະເທດມາເລເຊຍ, ແລະ ທ່ານ ນາງ ດີແວນ ຮອງນາຍົກ ລັດຖະມົນຕີ ແລະ ລັດຖະມົນຕີກະຊວງປ້ອງກັນປະເທດເນເທີແລນ.

ທ່ານແຂກທີ່ມີກຽດ,

ພາກພື້ນອິນໂດ-ປາຊີຟິກຂອງພວກເຮົາແມ່ນສູນກາງການເຕີບໃຫຍ່ຂະຫຍາຍຕົວຂອງໂລກ. ພວກເຮົາໂຊກດີທີ່ມີກຳລັງແຮງຂອງຊາວໜຸ່ມ, ພ້ອມກັບເຕັກໂນໂລຊີ ແລະ ຄວາມມີຊີວິດຊີວາ. ເໜືອສິ່ງອື່ນໃດ, ພວກເຮົາເຊື່ອມໂຍງເຂົ້າຫາກັນດ້ວຍທະເລທີ່ເສລີ ແລະ ເປີດກວ້າງ.

ສັນຕິພາບ ແລະ ຄວາມໝັ້ນຄົງໃນພາກພື້ນນີ້ບໍ່ໄດ້ມີຄວາມສຳຄັນຕໍ່ກັບພາກພື້ນນີ້ພຽງຢ່າງດຽວ. ມັນຍັງກ່ຽວຂ້ອງໂດຍກົງຕໍ່ກັບສັນຕິພາບ ແລະ ຄວາມຈະເລີນຮຸ່ງເຮືອງຂອງທົ່ວໂລກ.

ໃນມື້ນີ້, ລັດຖະມົນຕີຈາກປະເທດຕ່າງໆທີ່ເປັນຂໍ້ຕໍ່ເຊື່ອມລະຫວ່າງມະຫາສະໝຸດປາຊີຟິກ, ມະຫາສະໝຸດອິນເດຍ ແລະ ມະຫາສະໝຸດອັດລັງຕິກໄດ້ມາລວມຕົວກັນຢູ່ທີ່ນີ້ທັງໝົດ. ນີ້ສະແດງໃຫ້ເຫັນເຖິງຄວາມເຊື່ອມໂຍງກັນຂອງສາມມະຫາສະໝຸດ. ຂ້າພະເຈົ້າຂໍສະແດງຄວາມຕ້ອນຮັບຢ່າງອົບອຸ່ນມາຍັງການເຂົ້າຮ່ວມຂອງເນເທີແລນໃນຄັ້ງນີ້.

ໃນຂະນະດຽວກັນນັ້ນ, ອິນໂດ-ປາຊີຟິກກຳລັງປະເຊີນໜ້າກັບຄວາມເປັນຈິງອັນໂຫດຮ້າຍ. ຄວາມພະຍາຍາມທີ່ຈະປ່ຽນແປງສະຖານະພາບທີ່ເປັນຢູ່ ໂດຍຝ່າຍດຽວໂດຍການໃຊ້ກຳລັງ ຫຼື ການບັງຄັບ,

ການບີບບັງຄັບທາງດ້ານເສດຖະກິດ, ການທ້າທາຍຕ່າງໆຕໍ່ກົດລະບຽບທີ່ກຳນົດໄວ້, ການແຂ່ງຂັນທີ່ຊັບຊ້ອນ, ລວມທັງໃນຂົງເຂດໄຊເບີ, ອາວະກາດ ແລະ ຂໍ້ມູນຂ່າວສານ. ການຫັນທຸກສິ່ງທຸກຢ່າງໃຫ້ເປັນອາວຸດ. ເຮັດໃຫ້ເສັ້ນແບ່ງລະຫວ່າງ ຄວາມສະຫງົບ ແລະ ພາວະສຸກເສີນແມ່ນນັບມື້ນັບບໍ່ມີຄວາມຈະແຈ້ງ..

ພວກເຮົາກຳລັງຢູ່ໃນຍຸກທີ່ສື່ສັງຄົມອອນລາຍ ແລະ ປັນຍາປະດິດ (AI)
ຖືກນຳໃຊ້ໄປໃນທາງທີ່ບໍ່ຖືກຕ້ອງ ແລະ
ການຕັດສິນໃຈຂອງຄົນສາມາດຖືກສັ່ນຄອນໂດຍຂໍ້ມູນທີ່ຜິດ ແລະ
ການບິດເບືອນຂໍ້ມູນ. ແລ້ວແມ່ນຫຍັງທີ່ເປັນສິ່ງທີ່ສຳຄັນທີ່ສຸດໃນຕອນນີ້?
ນັ້ນກໍແມ່ນອິດສະລະຂອງແຕ່ລະຊາດໃນການຕັດສິນໃຈເລືອກເສັ້ນທາງຂອງຕົນເອງຕ
າມເຈດຈຳນົງຂອງເຂົາເຈົ້າ.

ໃນມື້ນີ້, ພວກເຮົາໄດ້ປະເຊີນກັບສະຖານະການທີ່ຊ່ອງແຄບຮໍມູຊບໍ່ເປັນອິດສະລະ ແລະ
ຖືກປິດ. ຊ່ອງແຄບທີ່ບໍ່ໄດ້ເປັນເສລີ ແລະ ບໍ່ເປີດ.
ເສັ້ນທາງຄົມມະນາຄົມທາງທະເລທີ່ບໍ່ເປັນເສລີ  ແລະ ບໍ່ເປີດ.
ລະບຽບທີ່ບໍ່ເປັນອິດສະລະ ແລະ ບໍ່ເປີດ.
ບໍ່ມີໃຜໄດ້ຜົນປະໂຫຍດຈາກສະພາບການດັ່ງກ່າວນີ້.
ການຮັກສາກົດລະບຽບທີ່ມີຄວາມເສລີ ແລະ ເປີດກວ້າງ ນັ້ນ ເປັນສິ່ງສຳຄັນທີ່ສຸດ.

ທ່ານແຂກທີ່ມີກຽດທຸກທ່ານ,

ແຕ່ລະປະເທດມີອຳນາດໃນການເລືອກເສັ້ນທາງຂອງຕົນເອງ ແລະ ບົນພື້ນຖານນັ້ນ, ພວກເຮົາຈະສ້າງ, ປົກປັກຮັກສາ ແລະ ເສີມຂະຫຍາຍພາກພື້ນທີ່ເປັນເສລີ ແລະ ເປີດກວ້າງ.

ປະເທດຍີ່ປຸ່ນຈະຮ່ວມມືກັບທຸກທ່ານເພື່ອໃຫ້ບັນລຸເປົ້າໝາຍນີ້.
ຄວາມມຸ່ງໝັ້ນນີ້ສະທ້ອນໃຫ້ເຫັນຜ່ານນະໂຍບາຍອິນໂດ-ປາຊີຟິກ (FOIP)
ສະບັບປັບປຸງໃໝ່ທີ່ລັດຖະບານຂອງ ທ່ານນາງ ທາກາອິຈິ ໄດ້ປະກາດໃຊ້.

ບໍ່ຄວນມີປະເທດໃດຖືກບັງຄັບ ຫຼື ກົດດັນໃຫ້ເລືອກເສັ້ນທາງໃດທາງໜຶ່ງ.

ທຸກປະເທດຕ້ອງສາມາດເລືອກອະນາຄົດໄດ້ດ້ວຍຕົນເອງ. ແລະ
ພາກພື້ນນີ້ຕ້ອງສືບຕໍ່ເປີດກວ້າງໃຫ້ແກ່ທຸກປະເທດທີ່ເຄົາລົບກົດລະບຽບ ແລະ
ຫຼັກການຮ່ວມກັນຂອງພວກເຮົາ.

ນີ້ແມ່ນວິໄສທັດຂອງອິນໂດປາຊີຟິກທີ່ຍີ່ປຸ່ນວາງໄວ້.

ເຖິງຢ່າງໃດກໍ່ຕາມ,
ວິໄສທັດດັ່ງກ່າວຈະບໍ່ສາມາດບັນລຸໄດ້ຈາກພຽງແຕ່ການຄາດຫວັງເທົ່ານັ້ນ.
ຈໍາເປັນຕ້ອງມີການລົງມືປະຕິບັດ. ຈໍາເປັນຕ້ອງດໍາເນີນການຢ່າງຕໍ່ເນື່ອງ ແລະ
ຍືນຍົງ.

ໂດຍສະເພາະ,
ເຈົ້າໜ້າທີ່ຮັບຜິດຊອບວຽກງານປ້ອງກັນປະເທດມີບົດບາດສໍາຄັນເພື່ອເຮັດໃຫ້ວິໄສທັ
ດນີ້ເປັນຈິງ.
ພວກເຮົາຈໍາເປັນຕ້ອງຮັບປະກັນວ່າຄວາມພະຍາຍາມຂອງແຕ່ລະປະເທດຈະບໍ່ສິ້ນສຸດ
ລົງດ້ວຍການດໍາເນີນງານແບບໂດດດ່ຽວ.
ບໍ່ວ່າຈະເປັນການຮ່ວມມືດ້ານການປະຕິບັດງານ, ການຝຶກອົບຮົມຮ່ວມກັນ,
ການແລກປ່ຽນຂໍ້ມູນ, ການຮ່ວມມືດ້ານອຸປະກອນປ້ອງກັນປະເທດ ແລະ ເຕັກໂນໂລຊີ,
ການຮ່ວມມືດ້ານອຸດສາຫະກໍາປ້ອງກັນປະເທດ,
ການສ້າງແບບແຜນໂຄງຮ່າງການຮ່ວມມື.
ພວກເຮົາຕ້ອງຮວບຮວມຄວາມພະຍາຍາມທັງໝົດເຫຼົ່ານີ້ ແລະ
ປ່ຽນພວກມັນໃຫ້ກາຍເປັນຄວາມສາມາດໃນການສະກັດກັ້ນ ແລະ
ຕອບໂຕ້ທີ່ມີປະສິດທິພາບ.

ພວກເຮົາຕ້ອງການສາມຢ່າງເພື່ອເຮັດໃຫ້ສິ່ງນີ້ເກີດຂຶ້ນ: ຄວາມໄວ້ວາງໃຈ,
ຄວາມໂປ່ງໃສ ແລະ ການສົນທະນາ.

ຄວາມໄວ້ວາງໃຈ. ຕ້ອງເຄົາລົບກົດໝາຍລະຫວ່າງປະເທດ .
ຕ້ອງເຄົາລົບອະທິປະໄຕຂອງແຕ່ລະປະເທດ.

ບໍ່ສາມາດຍອມຮັບການປ່ຽນແປງສະຖານະພາບໂດຍຝ່າຍດຽວທີ່ໃຊ້ກຳລັງ ຫຼື ການບັງຄັບ . ຫາກບໍ່ຍຶດໝັ້ນຫຼັກການເຫຼົ່ານີ້ຮ່ວມກັນຕໍ່, ລະບຽບຂອງພາກພື້ນກໍຈະບໍ່ມີຄວາມໝາຍ.

ຄວາມໂປ່ງໃສ. ການເພີ່ມທະວີກຳລັງທາງທະຫານ ແລະ ການດຳເນີນການຕ່າງໆໂດຍບໍ່ມີເຈດຕະນາທີ່ຊັດເຈນຈະເປັນສາເຫດຂອງຄວາມບໍ່ໄວ້ວາງໃຈ ແລະ ການຄິດໄລ່ຜິດພາດ. ຄວາມໂປ່ງໃສແມ່ນພື້ນຖານສໍາລັບການຫຼຸດຜ່ອນຄວາມເຄັ່ງຕຶງ ແລະ ການປ້ອງກັນການເກີດວິກິດການ.

ແລະ ການສົນທະນາ. ທຸກໆປະເທດມີຈຸດຢືນທີ່ແຕກຕ່າງກັນ. ທຸກໆປະເທດມີທັດສະນະທີ່ແຕກຕ່າງກັນ. ນັ້ນຄືເຫດຜົນທີ່ພວກເຮົາຈໍາເປັນຕ້ອງມີການສົນທະນາ.. ພວກເຮົາເຂົ້າຮ່ວມການສົນທະນາເພາະວ່າພວກເຮົາມີຄວາມແຕກຕ່າງ. ພວກເຮົາສືບຕໍ່ການສົນທະນາເພາະວ່າຍັງມີຄວາມເຄັ່ງຕຶງລະຫວ່າງພວກເຮົາ.

ຍີ່ປຸ່ນເປີດກວ້າງຢູ່ສະເໝີທີ່ຈະສົນທະນາກັບທຸກໆປະເທດ. ໃນກອງປະຊຸມ ADMM-Plus ທີ່ຈັດຂຶ້ນທີ່ກົວລາລຳເປີໃນປີກາຍນີ້, ເຊິ່ງເປັນເຈົ້າພາບໂດຍທ່ານລັດຖະມົນຕີ ທ່ານ ຄາເລດ ໃນທີ່ນີ້. ຂ້າພະເຈົ້າມີໂອກາດໄດ້ສົນທະນາຢ່າງກົງໄປກົງມາ ແລະ ມີປະສິດທິຜົນກັບຄູ່ຮ່ວມຕໍາແໜ່ງຈາກ ສປ ຈີນ.

ຂ້າພະເຈົ້າຮູ້ສຶກເສຍໃຈທີ່ພວກເຮົາບໍ່ມີໂອກາດໄດ້ພົບປະກັນໃນຄັ້ງນີ້.

ແຕ່ອີກເທື່ອໜຶ່ງ, ພວກເຮົາເປີດປະຕູໄວ້ສໍາລັບການສົນທະນາ. ຂ້າພະເຈົ້າຍັງຄົງມຸ່ງໝັ້ນທີ່ຈະສື່ສານກັບບັນດາປະເທດທີ່ກ່ຽວຂ້ອງ, ລວມທັງ ສປຈີນ ເພື່ອສັນຕິພາບ ແລະ ສະຖຽນລະພາບໃນພາກພື້ນ ແລະ ຂອງໂລກ.

ທ່ານແຂກທີ່ມີກຽດທຸກທ່ານ,

ຍີ່ປຸ່ນຈະດຳເນີນການຢ່າງເປັນຮູບປະທຳ.

ກ່ອນອື່ນໝົດ, ຍີ່ປຸ່ນຈະສ້າງຄວາມສາມາດດ້ານປ້ອງກັນປະເທດຢ່າງໝັ້ນຄົງ ແລະ ປັບປຸງໃຫ້ດີຂຶ້ນຢ່າງຕໍ່ເນື່ອງ ດ້ວຍລະດັບຄວາມໂປ່ງໃສທີ່ສູງ.

ປັນຍາປະດິດ, ລະບົບບໍ່ມີຄົນຂັບ, ໄຊເບີ, ອາວະກາດ, ການເຮັດສົງຄາມໃນຮູບແບບໃໝ່ໂດຍໃຊ້ເຕັກໂນໂລຍີເຫຼົ່ານີ້ກຳລັງແຜ່ຂະຫຍາຍໄປທົ່ວໂລກ. ມັນເປັນເລື່ອງປົກກະຕິທີ່ທຸກໆປະເທດຈະພະຍາຍາມປັບປຸງຄວາມສາມາດໃນການປ້ອງກັນຂອງຕົນເອງເພື່ອຕອບສະໜອງຕໍ່ສິ່ງທ້າທາຍອັນໃໝ່ນີ້. ຍີ່ປຸ່ນກໍຄືກັນ ຈະຕອບສະໜອງຕໍ່ການພັດທະນາໃໝ່ເຫຼົ່ານີ້ຢ່າງວ່ອງໄວ ແລະ ໝັ້ນຄົງ.

ພວກເຮົາຈະເຮັດແບບນີ້ເພື່ອປົກປັກຮັກສາປະເທດຊາດຂອງພວກເຮົາ ແລະ ປະກອບສ່ວນເຂົ້າໃນສັນຕິພາບ ແລະ ສະຖຽນລະພາບຂອງພາກພື້ນທີ່ເສລີ ແລະ ເປີດກວ້າງ. ແລະຍີ່ປຸ່ນກໍຈະປະຕິບັດການປັບປຸງນີ້ດ້ວຍຄວາມໂປ່ງໃສສູງ. ພວກເຮົາພັດທະນາຄວາມສາມາດເຫຼົ່ານີ້ເພື່ອຫຍັງ? ແລະ ບົນພື້ນຖານແນວຄິດອັນໃດ? ຍີ່ປຸ່ນຈະກ້າວໄປໜ້າພ້ອມກັບການໃຫ້ຄຳອະທິບາຍຢ່າງຈະແຈ້ງຕໍ່ປະຊາຄົມສາກົນ.

ການເສີມສ້າງຄວາມສາມາດດ້ານປ້ອງກັນຊາດຂັ້ນພື້ນຖານຂອງພວກເຮົາ, ການເສີມສ້າງພື້ນຖານການຜະລິດ ແລະ ເຕັກໂນໂລຊີດ້ານປ້ອງກັນປະເທດຂອງພວກເຮົາ ແລະ ການທົບທວນແກ້ໄຂເອກະສານຍຸດທະສາດສາມສະບັບທີ່ຄາດວ່າຈະເຮັດໃຫ້ສຳເລັດໃນທ້າຍປີນີ້ແມ່ນສ່ວນໜຶ່ງຂອງຄວາມພະຍາຍາມນີ້. ຍີ່ປຸ່ນຈະບໍ່ເມີນເສີຍຕໍ່ສະພາບຄວາມເປັນຈິງ. ພວກເຮົາຈະດຳເນີນການກະກຽມທີ່ຈຳເປັນດ້ວຍຄວາມຮັບຜິດຊອບອັນສູງ.

ທ່ານແຂກຜູ້ມີກຽດ, ບາງທ່ານອາດຈະເຄີຍໄດ້ຍິນຄຳວ່າ “ລັດທິທະຫານແບບໃໝ່” ແຕ່ວ່າມັນບໍ່ເປັນຄວາມຈິງເລີຍ.

ຂໍໃຫ້ລອງຄິດເບິ່ງ. ມີບາງປະເທດໜຶ່ງທີ່ມີອາວຸດນິວເຄລຍຈຳນວນມະຫາສານ ແລະ

ມີເຮືອບິນຖິ້ມລະເບີດທາງຍຸດທະສາດຈຳນວນຫຼາຍ. ຍີ່ປຸ່ນບໍ່ມີອາວຸດດັ່ງກ່າວເລີຍ. ແຕ່ຍີ່ປຸ່ນຍັງຖືກຕີລາຄາວ່າເປັນ "ລັດທິທະຫານແບບໃໝ່." ມັນບໍ່ແປກບໍ?

ນັບແຕ່ສົງຄາມໂລກຄັ້ງທີສອງສິ້ນສຸດລົງ, ຍີ່ປຸ່ນໄດ້ເຄົາລົບກົດໝາຍສາກົນຢ່າງສະເໝີມາ, ລວມທັງກົດບັດຂອງອົງການສະຫະປະຊາຊາດ ແລະ ໄດ້ພະຍາຍາມຢ່າງຈິງໃຈເພື່ອທີ່ຈະຮັກສາ ແລະ ເສີມສ້າງລະບຽບສາກົນທີ່ເສລີ ແລະ ເປີດກວ້າງ. ເສັ້ນທາງຂອງຍີ່ປຸ່ນໃນຖານະເປັນປະເທດຮັກສາສັນຕິພາບໄດ້ຮັບການຕີລາຄາສູງຈາກພາກພື້ນ ແລະ ປະຊາຄົມສາກົນ. ຄວາມຈິງນີ້ຈະບໍ່ຖືກສັ່ນສະເທືອນຈາກການກ່າວຫາທີ່ຜິດ. ຍ້ອນວ່າມັນເປັນຄວາມຈິງ.

ຂ້າພະເຈົ້າຂໍອະນຸຍາດກ່າວເພີ່ມເຕີມ, ປະການທີໜຶ່ງຄວາມແຕກຕ່າງໃນມຸມມອງ ແລະ ຄວາມຂັດແຍ່ງລະຫວ່າງປະເທດລ້ວນເກີດຂຶ້ນໄດ້. ສິ່ງທີ່ຈຳເປັນໃນເວລານັ້ນບໍ່ແມ່ນການກ່າວຫາທີ່ບໍ່ມີມູນຄວາມຈິງຊ້ຳໆໃນຂະນະອີກຝ່າຍໜຶ່ງບໍ່ຢູ່.
ສິ່ງທີ່ຈຳເປັນແມ່ນການສົນທະນາໂດຍກົງ ແລະ ຢ່າງກົງໄປກົງມາ. ແລະ ໃນຄວາມເປັນຈິງ, ປະຕູໄວ້ສຳລັບການສົນທະນາຂອງຍີ່ປຸ່ນແມ່ນກວ້າງຢູ່ສະເໝີ.

ປະການທີສອງ, ຍີ່ປຸ່ນຈະເພີ່ມທະວີການຮ່ວມມືກັບບັນດາທ່ານໃຫ້ແໜ້ນແຟ້ນຍິ່ງຂຶ້ນ.

ການເສີມສ້າງຄວາມສາມາດໃນການສະກັດກັ້ນ ແລະ
ການຕອບໂຕ້ຂອງພັນທະມິດຍີ່ປຸ່ນ-ສະຫະລັດ.
ການຍົກລະດັບການຝຶກອົບຮົມທີ່ຊັບຊ້ອນຂຶ້ນຜ່ານການນຳໃຊ້ຂໍ້ຕົກລົງການເຂົ້າເຖິງເຊິ່ງກັນແລະກັນກັບປະເທດອົດສະຕາລີ, ຟີລິບປິນ ແລະ ສະຫະລາຊະອານາຈັກ.
ການຮັບຮູ້ສະຖານະການທາງທະເລ ແລະ
ການຮ່ວມມືດ້ານເຕັກໂນໂລຊີທີ່ທັນສະໄໝໃນຂອບການຮ່ວມມື Quad.
ການຮ່ວມມືດ້ານການປ້ອງກັນປະເທດກັບບັນດາປະເທດອາຊຽນ.
ການເສີມສ້າງຄວາມຍືດຢຸ່ນແລະ ຄວາມທົນທານຂອງພື້ນຖານອຸດສາຫະກຳ,
ລວມທັງຜ່ານໂຄງການ PIPIR. ແລະ AUKUS.
ພວກເຮົາຈະເຊື່ອມຕໍ່ຄວາມພະຍາຍາມທັງໝົດເຫຼົ່ານີ້ເຂົ້າກັນໂດຍເລີ່ມຈາກການປ່ຽນຈຸດໃຫ້ເປັນເສັ້ນ ແລະ ຈາກເສັ້ນໄປເປັນໜ້າພຽງ.

ປະການທີສາມ, ຍີ່ປຸ່ນຕັ້ງໃຈຈະຮັບບົດບາດໃໝ່ໃນການຮ່ວມມືດ້ານອຸປະກອນປ້ອງກັນປະເທດໃນທົ່ວພາກພື້ນ.

ໃນເດືອນເມສາທີ່ຜ່ານມາ,
ຍີ່ປຸ່ນໄດ້ປັບປຸງຂອບການເຮັດວຽກພາຍໃນປະເທດຂອງຕົນກ່ຽວກັບການໂອນຍ້າຍຍຸດໂທປະກອນ ແລະ ເຕັກໂນໂລຊີປ້ອງກັນປະເທດໂດຍພື້ນຖານ. ໂຄງການ OSA,
ທີ່ເລີ່ມໃນປີ 2023, ກຳລັງສ້າງຜົນງານຢ່າງຕໍ່ເນື່ອງ. ຈຸດປະສົງຂອງໂຄງການລິເລີ່ມເຫຼົ່ານີ້ແມ່ນເພື່ອແນໃສ່ເສີມຂະຫຍາຍຄວາມສາມາດປ້ອງກັນ ແລະ ຄວາມສາມາດຕອບໂຕ້ຂອງພາກພື້ນໄດ້ຢ່າງເປັນຮູບປະທຳ. ແລະ ໂຄງການລິເລີ່ມທັງສອງໄດ້ຮັບການຕີລາຄາສູງຈາກບັນດາປະເທດໃນທົ່ວພາກພື້ນ.

ສິ່ງທີ່ສຳຄັນໃນປັດຈຸບັນແມ່ນການຮັບປະກັນການສະໜອງຍຸດໂທປະກອນ ແລະ ຄວາມສາມາດທີ່ຈຳເປັນໃຫ້ແກ່ພາກພື້ນໂດຍລວມຢ່າງສະໝ່ຳສະເໝີ.
ຈະເປັນແນວໃດຖ້າຫາກຂາດແຄນສິ່ງຂອງທີ່ຈຳເປັນ ແລະ
ການຂົນສົ່ງຖືກຕັດຂາດໃນຊ່ວງວິກິດ?
ພວກເຮົາບໍ່ອາດຍອມໃຫ້ສະຖານະການເຊັ່ນນັ້ນເກີດຂຶ້ນໄດ້ຢູ່ໃນທົ່ວພາກພື້ນ.

ຍ້ອນເຫດນັ້ນ, ຍີ່ປຸ່ນຈຶ່ງຕັ້ງໜ້າທີ່ຈະໃຫ້ການຮ່ວມມືດ້ານອຸປະກອນປ້ອງກັນປະເທດ,
ການຮ່ວມມືດ້ານອຸດສາຫະກຳປ້ອງກັນປະເທດ ແລະ ການຮ່ວມມືດ້ານການບຳລຸງຮັກສາ ແລະ ການສະໜັບສະໜູນຢ່າງຍືນຍົງ.
ເປົ້າໝາຍຂອງພວກເຮົາແມ່ນເພື່ອຮັບປະກັນວ່າແຕ່ລະປະເທດມີຄວາມສາມາດທີ່ຕົນຕ້ອງການ ແລະ ສາມາດໃຊ້ງານໄດ້ເມື່ອຕ້ອງການ.

ການຮ່ວມມືຈຳນວນຫຼາຍກຳລັງດຳເນີນໄປແລ້ວ.
ບໍ່ວ່າຈະເປັນການຮ່ວມມືກັບອິດສະຕາລີກ່ຽວກັບເຮືອຮົບ. ການສະໜອງລະບົບຣາດາ ແລະ ເຮືອລາດຕະເວນໃຫ້ຟີລິບປິນ. ການພັດທະນາການຮ່ວມມືກ່ຽວກັບເຮືອພິຄາດ ແລະ ເຮືອຮົບ. ນິວຊີແລນກໍສະແດງຄວາມສົນໃຈຕໍ່ເຮືອຮົບຂອງຍີ່ປຸ່ນ. ແລະ ການສ້າງແບບແຜນໂຄງຮ່າງການຮ່ວມມືໃໝ່ກັບອິນໂດເນເຊຍ.

ຄວາມພະຍາຍາມເຫຼົ່ານີ້ບໍ່ໄດ້ຈຳກັດສະເພາະ ຫຼື ບໍ່ໄດ້ແນໃສ່ປະເທດໃດໜຶ່ງ. ນີ້ແມ່ນຄວາມພະຍາຍາມທີ່ຈະສະໜັບສະໜູນແຕ່ລະປະເທດໃຫ້ເລືອກດ້ວຍຕົນເອງ, ປົກປ້ອງຕົນເອງ ແລະ ປະກອບສ່ວນເຂົ້າໃນສະຖຽນລະພາບໃນພາກພື້ນ. ຍີ່ປຸ່ນຫວັງວ່າຈະເປັນຄູ່ຮ່ວມງານທີ່ເຊື່ອຖືໄດ້ເພື່ອຈຸດປະສົງນັ້ນ. ແລະ ຍີ່ປຸ່ນຫວັງວ່າຈະເປັນຈຸດເຊື່ອມຕໍ່ທີ່ນຳເອົາຄວາມພະຍາຍາມຂອງພາກພື້ນມາຮ່ວມກັນ.

ບັນດາທ່ານແຂກທີ່ມີກຽດ,

ຄວາມແຕກແຍກເຮັດໃຫ້ການສະກັດກັ້ນອ່ອນແອລົງ. ຄວາມສາມັກຄີເສີມສ້າງການສະກັດກັ້ນໃຫ້ເຂັ້ມແຂງຂຶ້ນ.

ຖ້າຫາກເກີດຊ່ອງຫວ່າງຫຼື ຄວາມແຕກແຍກຂຶ້ນລະຫວ່າງສະຫະລັດ, ເອີຣົບ ແລະ ບັນດາປະເທດພັນທະມິດ ແລະ ບັນດາປະເທດທີ່ມີແນວຄິດດຽວກັນ, ກອງກຳລັງທີ່ສອຍໂອກາດຈະເຂົ້າມາຢ່າງແນ່ນອນ, ພວກເຮົາຕ້ອງສະກັດ ກັ້ນບໍ່ໃຫ້ສະຖານະການເຊັ່ນນັ້ນເກີດຂຶ້ນ. ພວກເຮົາຕ້ອງຮັກສາການຮ່ວມມືຂອງພວກເຮົາຕໍ່ໄປ. ຕອນນີ້ເຖິງເວລາທີ່ຈະເຮັດໃຫ້ການຮ່ວມມືຂອງພວກເຮົາແໜ້ນແຟ້ນຍິ່ງຂຶ້ນ.

ສິ່ງທີ່ພວກເຮົາຕ້ອງການບໍ່ແມ່ນພຽງແຕ່ພາກພື້ນທີ່ສາມາດອົດທົນກັບວິກິດການໄດ້ເທົ່ານັ້ນ. ພວກເຮົາຕ້ອງການພາກພື້ນທີ່ສາມາດຕ້ານທານກັບການຖືກບີບບັງຄັບໄດ້. ພວກເຮົາຕ້ອງການພາກພື້ນທີ່ບໍ່ຖືກຊັກນຳໂດຍຂ່າວສານທີ່ບໍ່ເປັນຄວາມຈິງ. ພວກເຮົາຕ້ອງການພາກພື້ນທີ່ບໍ່ໄດ້ຮັບອິດທິພົນຈາກແຮງກົດດັນ.

ອິນໂດ-ປາຊີຟິກທີ່ເສລີ ແລະ ເປີດກວ້າງບໍ່ແມ່ນສິ່ງທີ່ໃຜຜູ້ໜຶ່ງຈະມອບໃຫ້ໄດ້. ມັນເປັນສິ່ງທີ່ພວກເຮົາຕ້ອງສ້າງ ແລະ ປົກປ້ອງດ້ວຍຕົນເອງ. ແລະ ເປັນສິ່ງທີ່ພວກເຮົາຕ້ອງຖ່າຍທອດໃຫ້ຄົນລຸ້ນຕໍ່ໆໄປ.

ຍີ່ປຸ່ນຈະກ້າວໄປສູ່ເປົ້າໝາຍນີ້ໄປພ້ອມກັບທຸກໆທ່ານ. ຍີ່ປຸ່ນຈະລົງມືປະຕິບັດໄປພ້ອມກັບທຸກໆທ່ານ.

防衛省・自衛隊
MINISTRY OF DEFENSE

ຂໍຂອບໃຈທຸກທ່ານຫຼາຍໆທີ່ຕັ້ງໃຈຮັບຟັງ.